PLAN INTERNATIONAL
Until we are all equal

ອົງການ ແພລນ ສາກົນ ປະຈຳ ສປປ ລາວ

ເຮືອນເລກທີ 203, ບ. ໂພນສີນວນ
ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ
ສປປ ລາວ. ຕູ້ ປນ 6026

ໂທ: +856 (0) 21 353 409 -11
ແຟັກ: +856 (0) 21 313 512

www.plan-international.org/laos

# ປະກາດແຈ້ງການເຂົ້າຮ່ວມສົມທຽບລາຄາ

## ບໍລິການຫ້ອງພັກຂອງໂຮງແຮມ

ອົງການແພລນສາກົນ ແມ່ນອົງການສາກົນທີ່ພັດທະນາຊຸມຊົນໂດຍຖືເອົາ ເດັກນ້ອຍເປັນໃຈກາງ ພວກເຮົາຊ່ວຍເຫຼືອເດັກທຸກຍາກຢູ່ຫຼາຍປະເທດທີ່ກຳລັງພັດທະນາໃນທົ່ວໂລກ. ປັດຈຸບັນອົງການແພລນ ສາກົນປະຈຳ ສປປ ລາວ ກຳລັງຈັດຕັ້ງປະຕິບັດໂຄງການຢູ່ 3 ແຂວງ: ແຂວງ ບໍ່ແກ້ວ, ອຸດົມໄຊ ແລະ ສາລະວັນ ແລະ ມີຫ້ອງການໃຫຍ່ຢູ່ນະຄອນຫຼວງວຽງຈັນ. ໃນແຕ່ລະປີອົງການແພລນໄດ້ມີການໃຊ້ບໍລິການຫ້ອງພັກ ແລະ ລົດຮັບສົ່ງໃຫ້ແກ່ພະນັກງານ ແລະ ແຂກຂອງອົງການທີ່ໄດ້ມາຢ້ຽມຢາມໂຄງການເປັນຈຳນວນຫຼາຍ. ສະນັ້ນ , ອົງການແພລນສາກົນ ປະຈຳ ສປປ ລາວ ຂໍຖືໂອກາດແຈ້ງເຊີນມາຍັງ ບັນດາໂຮງແຮມທີ່ມີປະສົບການທີ່ສົນໃຈສະໜອງການບໍລິການດັ່ງກ່າວ ປະກອບເອກະສານສົມທຽບລາຄາ ຕາມລາຍລະອຽດ ແລະ ເງື່ອນໄຂດັ່ງລຸ່ມນີ້:

- ສຳເນົາ ທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຍັງໃຊ້ໄດ້ 1 ຊຸດ
- ສຳເນົາ ໃບເສຍພາສີອາກອນປະຈຳປີ 2024 1 ຊຸດ
- ເອກະສານອື່ນໆ ແມ່ນໃຫ້ປະກອບຕາມເງື່ອນໄຂໃນເອກະສານຂັດຕິດ

ບັນດາໂຮງແຮມທີ່ມີຄວາມສົນໃຈກະລຸນາເຂົ້າມາເອົາແບບຟອມສົມທຽບລາຄາ ແລ້ວປະກອບເອກະສານສົ່ງຫາຫ້ອງການອົງການແພລນສາກົນ ປະຈຳ ສປປ ລາວ ດັ່ງທີ່ຢູ່ຂ້າງລຸ່ມນີ້.

ມື້ສຸດທ້າຍໃນການຍື່ນເອກະສານສົມທຽບລາຄາແມ່ນບໍ່ໃຫ້ກາຍ **17:00 ໂມງແລງ** ຂອງວັນທີ **25 ເມສາ 2025**

| ຫ້ອງການອົງການແພລນປະຈຳນະຄອນຫລວງວຽງຈັນ |
|---|
| ເຮືອນເລກທີ 203, ໜ່ວຍ 10, ບ້ານ ໂພນສີນວນ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ<br>ໂທ: + 856 (0) 21 353 409 -11, ແຟັກ: + 856 (0) 21 313 512 |

__ໝາຍເຫດ:__

- ເອກະສານ ແລະ ຂໍ້ມູນຖືກຕ້ອງຕາມເງື່ອນໄຂ ຕ້ອງປົກປິດເປັນຄວາມລັບ ແລະ ບັນຈຸໃນຊອງທີ່ປິດຢ່າງສະນິດແໜ້ນ, ການຕື່ມລາຄາຄວນຄິດໄລ່ໃນຄອມພິວເຕີ ຫຼື ຂຽນກໍ່ໄດ້ ແຕ່ໃຫ້ລະອຽດ ແລະ ຫຼີກເວັ້ນການເປື້ອນ ຫຼື ຕື່ມຜິດ.
- ເອກະສານທີ່ທາງບໍລິສັດໄດ້ສົ່ງຫາ ອົງການແລ້ວບໍ່ສາມາດຖອນຄືນໄດ້.

ວັນທີ 10 ເມສາ 2025

PLAN
ອົງການແພລນສາກົນ
ປະຈຳ ສປປ ລາວ

ແສງສັນຕິສຸກ ຊະນະສີສານ
ຮອງອຳນວຍການ
ອົງການແພລນສາກົນ ປະຈຳ ສປປ ລາວ